ຜ-ຟຟລ ຈັດຝຶກອົບຮົມ “ກວດກາພັກ – ກວດກາລັດ ແລະ ວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ” ເສີມສ້າງຄວາມໂປ່ງໃສໃນອົງກອນ

EDL-GEN











ວັນທີ 06 ມີນາ 2026 ທີ່ຕຶກສະຖາບັນໄຟຟ້າລາວ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຈັດການຝຶກອົບຮົມ ຫົວຂໍ້ “ກວດກາພັກ – ກວດກາລັດ ແລະ ວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ” ໂດຍໄດ້ຮັບກຽດຈາກ ທ່ານ ພຸດທະວັນ ນັນທະວົງ ກຳມະການປະຈຳພັກ, ປະທານຄະນະກວດກາພັກກະຊວງ ແລະ ຫົວໜ້າກົມກວດກາ ກະຊວງອຸດສາຫະກຳ ແລະ ການຄ້າ ເຂົ້າຮ່ວມເປັນປະທານໃນພິທີເປີດ.

ການຝຶກອົບຮົມໃນຄັ້ງນີ້ ມີທ່ານ ສຸກສະຫວາດ ໂສສຸພັນ ຜູ້ອຳນວຍການໃຫ່ຍ ຜ-ຟຟລ ໃຫ້ກຽດຂຶ້ນກ່າວມີຄຳເຫັນ, ມີບັນດາຜູ້ອຳນວຍການຝ່າຍ, ພະນັກງານ ແລະ ນັກສຳມະນາກອນຂອງ ຜ-ຟຟລ ເຂົ້າຮ່ວມຢ່າງພ້ອມພຽງ ເພື່ອຮ່ວມຮັບຟັງແນວທາງ ແລະ ຄວາມຮູ້ດ້ານວຽກງານກວດກາ, ການຕິດຕາມ ແລະ ການສະກັດກັ້ນການສໍ້ລາດບັງຫຼວງ ໃຫ້ມີປະສິດທິພາບ ແລະ ໂປ່ງໃສຫຼາຍຂຶ້ນ.

ຜ-ຟຟລ ເຫັນວ່າ ວຽກງານກວດກາ ແລະ ການກວດສອບ ແມ່ນໜຶ່ງໃນກົນໄກສຳຄັນ ໃນການສ້າງຄວາມໂປ່ງໃສ, ຄວາມຮັບຜິດຊອບ ແລະ ຄວາມເປັນລະບຽບໃນການບໍລິຫານວຽກງານຂອງອົງກອນ.

ພ້ອມນີ້, ການຝຶກອົບຮົມຄັ້ງນີ້ ຍັງເປັນໂອກາດໃຫ້ພະນັກງານ ໄດ້ນຳເອົາຄວາມຮູ້ ແລະ ບົດຮຽນທີ່ໄດ້ຮັບ ໄປປັບໃຊ້ໃນການປະຕິບັດວຽກງານຕົວຈິງ ເພື່ອໃຫ້ລະບົບການກວດກາ-ກວດສອບ ຂອງ ຜ-ຟຟລ ມີຄວາມຄົບຖ້ວນ ແລະ ທັນສະໄໝຫຼາຍຂຶ້ນ.

ຜ-ຟຟລ ຈະສືບຕໍ່ສົ່ງເສີມ ແລະ ພັດທະນາວຽກງານກວດກາພາຍໃນອົງກອນ ໃຫ້ມີມາດຕະຖານ, ໂປ່ງໃສ ແລະ ສອດຄ່ອງກັບນະໂຍບາຍຂອງພັກ ແລະ ລັດ ເພື່ອສ້າງອົງກອນທີ່ມີຄຸນນະພາບ ແລະ ຍືນຍົງໃນອະນາຄົດ.

ໃນໂອກາດທີ່ໄດ້ຝຶກອົບຮົມຄັ້ງນີ້ ຄະນະ ຝຶກອົບຮົມ ໄດ້ເຂົ້າຢ້ຽມຢາມເຂື່ອນໄຟຟ້ານ້ຳງື່ມ 1 ເຊິ່ງເປັນໜຶ່ງໃນບັນດາໂຄງການທີ່ ຜ-ຟຟລ ຄຸ້ມຄອງ ເພື່ອສ້າງຄວາມເຂົ້າໃຈການດຳເນີນທຸລະກິດຂອງ ຜ-ຟຟລ ໃຫ້ຫຼາຍຂຶ້ນ